ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 16 /ຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 10 JUN 2021

# ຂໍ້ຕົກລົງ
# ວ່າດ້ວຍອັດຕາສ່ວນຄວາມພຽງພໍຂອງທຶນຂອງບໍລິສັດຫຼັກຊັບ (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ ສະບັບປັບປຸງ ສະບັບເລກທີ 79/ສພຊ, ລົງວັນທີ 3 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, ລົງວັນທີ 5 ເມສາ 2021;
- ອີງຕາມ ໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 146/ສຄຄຊ, ລົງວັນທີ 27 ພຶດສະພາ 2021.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ລະບຽບສະບັບນີ້ກຳນົດ ລະບຽບການ ແລະ ມາດຕະການ ກ່ຽວກັບອັດຕາສ່ວນຄວາມພຽງພໍຂອງທຶນຂອງບໍລິສັດຫຼັກຊັບ ເພື່ອເປັນການບໍລິຫານຄວາມສ່ຽງທາງດ້ານການເງິນ ແນໃສ່ຮັບປະກັນຄວາມໝັ້ນຄົງ ໃນການດຳເນີນທຸລະກິດຫຼັກຊັບຂອງບໍລິສັດຫຼັກຊັບ.

**ມາດຕາ 2 (ໃໝ່) ອັດຕາສ່ວນຄວາມພຽງພໍຂອງທຶນ**

ອັດຕາສ່ວນຄວາມພຽງພໍຂອງທຶນ ແມ່ນອັດຕາສ່ວນທາງການເງິນ ທີ່ສະແດງເຖິງຄວາມສາມາດໃນການຊຳລະໜີ້ສິນໄລຍະສັ້ນ, ການປ້ອງກັນ ແລະ ການບໍລິຫານຄວາມສ່ຽງທາງການເງິນ ທີ່ເກີດຈາກການດຳເນີນທຸລະກິດຫຼັກຊັບຂອງບໍລິສັດຫຼັກຊັບ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຊັບສິນທັງໝົດ** ໝາຍເຖິງ ຜົນລວມທັງໝົດຂອງຊັບສິນຂອງບໍລິສັດຫຼັກຊັບ ທີ່ສະແດງອອກໃນໃບສະຫຼຸບຊັບສົມບັດ ເບື້ອງຊັບສິນ ແຕ່ບໍ່ລວມຊັບສິນທີ່ເປັນຂອງຜູ້ລົງທຶນ;

2. **ມູນຄ່າຄວາມສ່ຽງຂອງຊັບສິນໝູນວຽນ** ໝາຍເຖິງ ຜົນລວມຂອງແຕ່ລະລາຍງານຂອງຊັບສິນໝູນວຽນ ຕາມມູນຄ່າຕົວຈິງໃນບັນຊີ ຄູນໃຫ້ ນ້ຳໜັກຄວາມສ່ຽງຂອງຊັບສິນໝູນວຽນແຕ່ລະປະເພດ;

3. **ຊັບສິນໄລຍະຍາວ** ໝາຍເຖິງ ຊັບສິນ ທີ່ບໍ່ສາມາດແລກປ່ຽນ ເປັນເງິນ ພາຍໃນ 1 ປີ ປະກອບມີ: ຊັບສິນບັດຄົງທີ່, ເງິນລົງທຶນໄລຍະຍາວ, ໜີ້ຕ້ອງຮັບໄລຍະຍາວ ແລະ ຊັບສິນອື່ນໆ ທີ່ບໍ່ສາມາດຊື້ ຂາຍ ແລກປ່ຽນພາຍໃນ 1 ປີ;

4. **ໜີ້ສິນທັງໝົດ** ໝາຍເຖິງ ຜົນລວມທັງໝົດຂອງໜີ້ສິນຂອງບໍລິສັດຫຼັກຊັບ ທີ່ສະແດງອອກໃນໃບສະຫຼຸບຊັບສົມບັດເບື້ອງໜີ້ສິນ ແຕ່ບໍ່ລວມໜີ້ຕ້ອງສົ່ງຂອງຜູ້ລົງທຶນ;

5. **ໜີ້ສິນທັງໝົດໄລຍະຍາວ** ໝາຍເຖິງ ເງິນກູ້ຢືມໄລຍະຍາວ ແລະ ໜີ້ຕ້ອງສົ່ງໄລຍະຍາວ ລະຫວ່າງບໍລິສັດໃນກຸ່ມ ແລະ ໜີ້ຕ້ອງສົ່ງໄລຍະຍາວອື່ນໆ;

6. **ໜີ້ສິນໄລຍະສັ້ນນອກໃບສະຫຼຸບຊັບສົມບັດ** ໝາຍເຖິງ ລາຍການທີ່ມີຜົນກະທົບຕໍ່ໜີ້ສິນຂອງບໍລິສັດຫຼັກຊັບ ທີ່ມີອາຍຸການຊໍາລະພາຍໃນ 1 ປີ ແຕ່ບໍລິສັດຫຼັກຊັບ ບໍ່ໄດ້ເອົາເຂົ້າມາລວມໃນໃບສະຫຼຸບຊັບສົມບັດ.

**ມາດຕາ 4 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ນໍາໃຊ້ສໍາລັບ ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການດໍາເນີນທຸລະກິດຫຼັກຊັບຂອງບໍລິສັດຫຼັກຊັບຢູ່ ສປປ ລາວ ຍົກເວັ້ນ ບໍລິສັດຫຼັກຊັບທີ່ດໍາເນີນທຸລະກິດຫຼັກຊັບ ສະເພາະເປັນທີ່ປຶກສາທາງດ້ານການເງິນ.

## ໝວດທີ 2
## ອັດຕາສ່ວນຄວາມພຽງພໍຂອງທຶນ

**ມາດຕາ 5 (ປັບປຸງ) ການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ**

ອັດຕາສ່ວນຄວາມພຽງພໍຂອງທຶນ ຕ້ອງຄິດໄລ່ຕາມສູດ ດັ່ງນີ້:

$$\text{ອັດຕາສ່ວນຄວາມພຽງພໍຂອງທຶນ} = \frac{\text{ຊັບສິນທັງໝົດ} - \text{ຊັບສິນໄລຍະຍາວ} - \text{ມູນຄ່າຄວາມສ່ຽງຂອງຊັບສິນໝູນວຽນ} - \text{ໜີ້ສິນທັງໝົດ}}{\text{ໜີ້ສິນທັງໝົດ} - \text{ໜີ້ສິນໄລຍະຍາວ} + \text{ໜີ້ສິນໄລຍະສັ້ນນອກໃບສະຫຼຸບຊັບສິນບັດ}} \times 100$$

ສໍາລັບລາຍລະອຽດ ກ່ຽວກັບການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ໃຫ້ປະຕິບັດຕາມຄໍາແນະນໍາສະເພາະຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ທີ່ກໍານົດອອກໃນແຕ່ລະໄລຍະ.

**ມາດຕາ 6 (ໃໝ່) ລະດັບຄວາມພຽງພໍຂອງທຶນ**

ບໍລິສັດຫຼັກຊັບ ຕ້ອງຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນຕາມສູດທີ່ໄດ້ກໍານົດໄວ້ໃນ ມາດຕາ 5 ຂອງຂໍ້ຕົກລົງນີ້ ແລະ ຕ້ອງຮັກສາອັດຕາສ່ວນຄວາມພຽງພໍຂອງທຶນ ໃຫ້ຢູ່ໃນລະດັບ ໃຫຍ່ກວ່າ ຫຼື ເທົ່າກັບສິບສອງສ່ວນຮ້ອຍ (12%).

**ມາດຕາ 7 ພັນທະຂອງບໍລິສັດຫຼັກຊັບ**

ບໍລິສັດຫຼັກຊັບ ມີພັນທະ ດັ່ງນີ້:

1. ຄິດໄລ່ ແລະ ລາຍງານ ອັດຕາສ່ວນຄວາມພຽງພໍຂອງທຶນຂອງຕົນ ໃຫ້ຖືກຕ້ອງ ແລະ ທັນຕາມກຳນົດເວລາ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້;

2. ແຕ່ງຕັ້ງຜູ້ຮັບຜິດຊອບໃນການ ຄິດໄລ່ ແລະ ລາຍງານ ກ່ຽວກັບອັດຕາສ່ວນຄວາມພຽງພໍຂອງທຶນ ແລະ ສົ່ງລາຍຊື່ຜູ້ຖືກແຕ່ງຕັ້ງໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຢ່າງເປັນລາຍລັກອັກສອນ.

**ມາດຕາ 8 ການລາຍງານ**

ບໍລິສັດຫຼັກຊັບ ຕ້ອງລາຍງານ ກ່ຽວກັບອັດຕາສ່ວນຄວາມພຽງພໍຂອງທຶນ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

**1. ການລາຍງານແບບປົກກະຕິ.**

**1.1.** ອັດຕາສ່ວນຄວາມພຽງພໍຂອງທຶນຂອງ ແຕ່ລະວັນລັດຖະການໃຫ້ລາຍງານຜ່ານທາງເອເລັກໂຕຣນິກ ພາຍໃນວັນລັດຖະການຖັດໄປ ຕາມແບບຟອມລາຍງານທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກຳນົດ;

**1.2.** ອັດຕາສ່ວນຄວາມພຽງພໍຂອງທຶນຂອງ ວັນລັດຖະການສຸດທ້າຍຂອງເດືອນ ໃຫ້ລາຍງານຜ່ານທາງເອກະສານ ພາຍໃນເວລາ 10 ວັນ ຂອງເດືອນຖັດໄປ ຕາມແບບຟອມລາຍງານທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກຳນົດ.

**2. ການລາຍງານແບບກະທັນຫັນ**

**2.1.** ອັດຕາສ່ວນຄວາມພຽງພໍຂອງທຶນ ຫຼຸດລົງຕໍ່າກວ່າ ຊາວສ່ວນຮ້ອຍ (20%) ຕ້ອງລາຍງານຜ່ານທາງເອກະສານ ພາຍໃນເວລາ 2 ວັນ ລັດຖະການ ຖັດໄປ ພ້ອມດ້ວຍສາເຫດທີ່ເຮັດໃຫ້ອັດຕາສ່ວນດັ່ງກ່າວຫຼຸດລົງ ແລະ ສືບຕໍ່ລາຍງານເປັນແຕ່ລະວັນ ຈົນກວ່າຈະສາມາດແກ້ໄຂ ໃຫ້ອັດຕາສ່ວນຄວາມພຽງພໍຂອງທຶນ ຢູ່ໃນລະດັບ ຊາວສ່ວນຮ້ອຍ (20%) ຂຶ້ນໄປ ເປັນເວລາຢ່າງໜ້ອຍ 5 ວັນ ລັດຖະການ ຕໍ່ເນື່ອງ;

**2.2.** ອັດຕາສ່ວນຄວາມພຽງພໍຂອງທຶນ ຫຼຸດລົງຕໍ່າກວ່າ ສິບສອງສ່ວນຮ້ອຍ (12%) ຕ້ອງລາຍງານຜ່ານທາງເອກະສານ ພາຍໃນວັນລັດຖະການຖັດໄປ ພ້ອມດ້ວຍສາເຫດທີ່ເຮັດໃຫ້ອັດຕາສ່ວນດັ່ງກ່າວຫຼຸດລົງ ແລະ ສືບຕໍ່ລາຍງານເປັນແຕ່ລະວັນ ຈົນກວ່າຈະສາມາດແກ້ໄຂ ໃຫ້ອັດຕາສ່ວນຄວາມພຽງພໍຂອງທຶນຢູ່ໃນລະດັບ ຊາວສ່ວນຮ້ອຍ (20%) ຂຶ້ນໄປ ເປັນເວລາຢ່າງໜ້ອຍ 5 ວັນລັດຖະການ ຕໍ່ເນື່ອງ;

**2.3.** ແຜນການແກ້ໄຂບັນຫາ ກ່ຽວກັບອັດຕາສ່ວນຄວາມພຽງພໍຂອງທຶນ ພາຍໃນເວລາ 10 ວັນລັດຖະການ ໃນກໍລະນີເກີດເຫດການທີ່ໄດ້ກຳນົດໄວ້ໃນ ຂໍ້ 2.1 ຫຼື 2.2 ຂອງມາດຕານີ້ ພ້ອມທັງປະຕິບັດຕາມແຜນການແກ້ໄຂບັນຫາໃຫ້ສຳເລັດ ພາຍໃນເວລາ 90 ວັນ ນັບແຕ່ວັນທີ່ອັດຕາສ່ວນຄວາມພຽງພໍຂອງທຶນຫຼຸດລົງຕໍ່າກ່ວາ ຊາວສ່ວນຮ້ອຍ (20%) ເປັນຕົ້ນໄປ. ຍົກເວັ້ນກໍລະນີ ສາມາດແກ້ໄຂໃຫ້ອັດຕາສ່ວນຄວາມພຽງພໍຂອງທຶນ ຢູ່ໃນລະດັບ ຊາວສ່ວນຮ້ອຍ (20%) ພາຍໃນເວລາ 10 ວັນ ລັດຖະການ ນັບແຕ່ວັນທີອັດຕາສ່ວນຄວາມພຽງພໍຂອງທຶນຫຼຸດລົງຕໍ່າກວ່າ ຊາວສ່ວນຮ້ອຍ (20%) ເປັນຕົ້ນໄປ.

ກໍລະນີ ມີລາຍການນອກໃບສະຫຼຸບຊັບສົມບັດ ທີ່ໄດ້ເອົາມາຄິດໄລ່ເຂົ້າໃນອັດຕາສ່ວນຄວາມພຽງພໍຂອງທຶນ, ບໍລິສັດຫຼັກຊັບ ຕ້ອງສົ່ງບົດລາຍງານ ພ້ອມດ້ວຍເຫດຜົນ ແລະ ສຳເນົາເອກະສານທີ່ກ່ຽວຂ້ອງກັບລາຍການນອກໃບສະຫຼຸບຊັບສົມບັດ ຢ່າງເປັນລາຍລັກອັກສອນ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 9 ຂໍ້ຫ້າມ**

ຫ້າມ ບໍລິສັດຫຼັກຊັບ ມີພຶດຕິກຳໃດໜຶ່ງບໍ່ວ່າ ທາງກົງ ຫຼື ທາງອ້ອມ ດັ່ງນີ້:

1. ລະເວັ້ນການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນເປັນແຕ່ລະວັນ;
2. ຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນບໍ່ຖືກຕ້ອງ;
3. ລາຍງານການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນລ່າຊ້າ;
4. ສົ່ງແຜນການແກ້ໄຂບັນຫາ ກ່ຽວກັບອັດຕາສ່ວນຄວາມພຽງພໍຂອງທຶນຊັກຊ້າ;
5. ແກ້ໄຂບັນຫາ ກ່ຽວກັບອັດຕາສ່ວນຄວາມພຽງພໍຂອງທຶນລ່າຊ້າ;
6. ແກ້ໄຂບັນຫາອັດຕາສ່ວນຄວາມພຽງພໍຂອງທຶນ ບໍ່ຖືກຕ້ອງຕາມແຜນການ ຫຼື ບໍ່ສອດຄ່ອງກັບລະບຽບການ.

## ໝວດທີ 3
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 10 ນະໂຍບາຍຕໍ່ຜູ້ມີຜົນງານ**

ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການດຳເນີນທຸລະກິດຫຼັກຊັບຂອງບໍລິສັດຫຼັກຊັບ ຢູ່ ສປປ ລາວ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 11 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການດຳເນີນທຸລະກິດຫຼັກຊັບຂອງບໍລິສັດຫຼັກຊັບ ຢູ່ ສປປ ລາວ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ, ປັບໃໝ ແລະ ມາດຕະການເພີ່ມເຕີມ ດັ່ງນີ້:

ມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະດັ່ງລຸ່ມນີ້:

1. ການເປັນລະເມີດຄັ້ງທຳອິດ ທີ່ມີລັກສະນະເບົາ ເປັນຕົ້ນ ບໍ່ໃຫ້ການຮ່ວມມືກັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ, ບໍ່ສະໜອງຂໍ້ມູນ ແລະ ເອກະສານ ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ ແລະ ກໍລະນີການລະເມີດອື່ນທີ່ສ້າງຄວາມເສຍຫາຍບໍ່ເກີນ 1.000.000 ກີບ;
2. ອັດຕາສ່ວນຄວາມພຽງພໍຂອງທຶນ ຢູ່ໃນລະຫວ່າງ ສິບສອງສ່ວນຮ້ອຍ (12%) ຫາ ຕ່ຳກວ່າ ຊາວສ່ວນຮ້ອຍ (20%);
3. ລະເວັ້ນການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນເປັນແຕ່ລະວັນ ແຕ່ 1 ວັນ ຫາ 2 ວັນລັດຖະການ;
4. ຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນບໍ່ຖືກຕ້ອງ 1 ວັນ ລັດຖະການ;
5. ລາຍງານການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນລ່າຊ້າ ແຕ່ 1 ວັນ ຫາ 2 ວັນ ລັດຖະການ;
6. ນຳສົ່ງແຜນການແກ້ໄຂບັນຫາ ກ່ຽວກັບອັດຕາສ່ວນຄວາມພຽງພໍຂອງທຶນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 8 ຂໍ້ 2.3 ຂອງຂໍ້ຕົກລົງ ສະບັບນີ້ ລ່າຊ້າ ແຕ່ 1 ວັນ ຫາ 2 ວັນ ລັດຖະການ;

7. ມີພຶດຕິກຳທີ່ຂັດກັບຂໍ້ຕົກລົງສະບັບນີ້ ແຕ່ບໍ່ແມ່ນການລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 29 ຂອງຂໍ້ຕົກລົງສະບັບນີ້;

8. ມີພຶດຕິກຳອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ມາດຕະການປັບໃໝ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ການເປັນລະເມີດຄັ້ງທຳອິດ ທີ່ມີລັກສະນະຮ້າຍແຮງ ຊຶ່ງມີມູນຄ່າຄວາມເສຍຫາຍເກີນ 1.000.000 ກີບ, ມີເຈດຕະນາໃນການລະເມີດ ຫຼື ຖືກປະຕິບັດມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນແລ້ວ ແຕ່ຍັງສືບຕໍ່ລະເມີດ ເປັນຄັ້ງທີ 2 ຈະຖືກປັບໃໝ ຈຳນວນ 2 ເທົ່າ ຂອງມູນຄ່າຄວາມເສຍຫາຍທີ່ເກີດຈາກການລະເມີດຂອງຕົນ;

2. ລະເວັ້ນການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນເປັນແຕ່ລະວັນ ນັບແຕ່ 3 ວັນ ລັດຖະການຂຶ້ນໄປ ຈະຖືກປັບໃໝ 10.000.000 ກີບ ຕໍ່ວັນ;

3. ຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນບໍ່ຖືກຕ້ອງ 2 ວັນ ລັດຖະການ ຂຶ້ນໄປ ຈະຖືກປັບໃໝ 5.000.000 ກີບ ຕໍ່ວັນ;

4. ລາຍງານການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນລ່າຊ້າ ແຕ່ 3 ວັນ ຫາ 5 ວັນ ລັດຖະການ ຈະຖືກປັບໃໝ 3.000.000 ກີບ ຕໍ່ວັນ;

5. ລາຍງານການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນລ່າຊ້າ ແຕ່ 6 ວັນ ຫາ 10 ວັນ ລັດຖະການ ຂຶ້ນໄປ ຈະຖືກປັບໃໝ 10.000.000 ກີບ ຕໍ່ວັນ;

6. ລາຍງານການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນລ່າຊ້າ ຫຼາຍກວ່າ 10 ວັນ ລັດຖະການ ຖືວ່າບໍ່ລາຍງານການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ຈະຖືກປັບໃໝ 10.000.000 ກີບ;

7. ສົ່ງແຜນການແກ້ໄຂບັນຫາ ອັດຕາສ່ວນຄວາມພຽງພໍຂອງທຶນລ່າຊ້າ ແຕ່ 3 ວັນ ຫາ 5 ວັນ ລັດຖະການ ຈະຖືກປັບໃໝ 5.000.000 ກີບ ຕໍ່ວັນ;

8. ສົ່ງແຜນການແກ້ໄຂບັນຫາ ອັດຕາສ່ວນຄວາມພຽງພໍຂອງທຶນລ່າຊ້າ ແຕ່ 6 ວັນ ຫາ 10 ວັນ ລັດຖະການ ຈະຖືກປັບໃໝ 10.000.000 ກີບ ຕໍ່ວັນ;

9. ແກ້ໄຂບັນຫາອັດຕາສ່ວນຄວາມພຽງພໍຂອງທຶນລ່າຊ້າ ຫຼາຍກວ່າ 10 ວັນ ລັດຖະການ ຖືວ່າບໍ່ນຳສົ່ງແຜນການແກ້ໄຂບັນຫາ ຈະຖືກປັບໃໝ 30.000.000 ກີບ ຕໍ່ວັນ;

10. ແກ້ໄຂບັນຫາອັດຕາສ່ວນຄວາມພຽງພໍຂອງທຶນລ່າຊ້າ ບໍ່ທັນເວລາຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ 15.000.000 ກີບ ຕໍ່ວັນ;

11. ອັດຕາສ່ວນຄວາມພຽງພໍຂອງທຶນ ຕໍ່າກວ່າ ສິບສອງສ່ວນຮ້ອຍ (12%) ຈະຖືກປັບໃໝ 5.000.000ກີບ ຕໍ່ວັນ.

ມາດຕະການເພີ່ມເຕີມຕໍ່ ບໍລິສັດຫຼັກຊັບ ມີດັ່ງນີ້:

1. ໃຫ້ແກ້ໄຂການລະເມີດຂອງຕົນຄືນໃຫ້ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ອັດຕາສ່ວນຄວາມພຽງພໍຂອງທຶນຂອງ ບໍລິສັດຫຼັກຊັບ ຕໍ່າກວ່າ ຊາວສ່ວນຮ້ອຍ (20%) ແມ່ນບໍ່ອະນຸຍາດໃຫ້ຂະຫຍາຍ ສາຂາ, ໜ່ວຍບໍລິການ ແລະ ຫ້ອງການຜູ້ຕາງໜ້າຂອງບໍລິສັດຫຼັກຊັບຕ່າງປະເທດ;

3. ອັດຕາສ່ວນຄວາມພຽງພໍຂອງທຶນຂອງ ບໍລິສັດຫຼັກຊັບ ຕໍ່າກວ່າ ສິບສອງສ່ວນຮ້ອຍ (12%) ເປັນເວລາ 6 ເດືອນຕໍ່ເນື່ອງ ຫຼື ອັດຕາສ່ວນຄວາມພຽງພໍຂອງທຶນ ຕໍ່າກວ່າ ຫຼື ເທົ່າກັບ ສູນສ່ວນຮ້ອຍ (0%)

ຫຼື ບໍ່ສາມາດແກ້ໄຂບັນຫາອັດຕາສ່ວນຄວາມພຽງພໍຂອງທຶນ ຕາມແຜນການແກ້ໄຂທີ່ໄດ້ກຳນົດໃຫ້ ບໍລິສັດຫຼັກຊັບ ຈະຖືກຈຳກັດ ຫຼື ໂຈະການດຳເນີນທຸລະກິດຫຼັກຊັບ ບາງສ່ວນ ຫຼື ທັງໝົດ;

4. ເປີດເຜີຍ ກ່ຽວກັບການລະເມີດ ການຄິດໄລ່ ແລະ ຮັກສາ ອັດຕາສ່ວນຄວາມພຽງພໍຂອງທຶນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ລົງໃນເວັບໄຊຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ພາຍຫຼັງທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອອກຂໍ້ຕົກລົງປັບໃໝ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

### ມາດຕາ 12 ການຈັດຕັ້ງປະຕິບັດ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການດຳເນີນທຸລະກິດຫຼັກຊັບຂອງບໍລິສັດຫຼັກຊັບຢູ່ ສປປ ລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

### ມາດຕາ 13 (ປັບປຸງ) ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນລະບຽບວ່າດ້ວຍຄວາມພຽງພໍຂອງທຶນຂອງບໍລິສັດຫຼັກຊັບ ສະບັບເລກທີ 0008/ຄຄຊ, ລົງວັນທີ 1 ເມສາ 2016.

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ສອນໄຊ ສິດພະໄຊ